ສຳນັກງານໃຫຍ່

ເລກທີ: 044 /ທຄຕລ 2020

ນະຄອນຫຼວງວຽງຈັນ, ວັນທີ: 30 APR 2020

# ໜັງສືແຈ້ງເຊີນ

**ເຖິງ** : ບັນດາບໍລິສັດ ຫ້າງຮ້ານຕົວແທນຈຳໜ່າຍອຸປະກອນໄອທີ ຢູ່ໃນນະຄອນຫລວງວຽງຈັນ.
**ເລື່ອງ** : ແຈ້ງເຊີນເຂົ້າຮ່ວມການປະເມີນລາຄາ ເຮືອນຄິວທັນສະໄໝ.

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ຂໍແຈ້ງເຊີນມາຍັງບໍລິສັດ, ຫ້າງຮ້ານ ຕົວແທນຈຳໜ່າຍອຸປະກອນໄອທີຊາບວ່າ ທຄຕລ ມີຄວາມຕ້ອງການຈັດຊື້ອຸປະກອນ ເຮືອນຄິວທັນສະໄໝ. ເພື່ອມາຮັບໃຊ້ເຂົ້າໃນລະບົບວຽກງານວິຊາສະເພາະຂອງ ທຄຕລ ດັ່ງມີລາຍການຂ້າງລຸ່ມນີ້:

| ລ/ດ | ລາຍການ | ລາຍລະອຽດສະເປັກ | ຈຳນວນ |
|---|---|---|---|
| 1 | ເຮືອນຄິວທັນສະໄໝ | - 22" Touch Screen Monitor OEM<br>- PC - Core i3, Ram 8GB, SSD 256GB , inc HDMI Port<br>- HP Laserjet M15A<br>- Epson Thermal Printer TM88VI<br>- Barcode and Qr Code Scan<br>- Cabinet Body (Webcam + Speaker) Red + White Color<br>- UPS APC1000VA<br>- ລາຍລະອຽດຕາມເອກະສານຕິດຄັດ. | 15 ຊຸດ |

**I. ເງື່ອນໄຂຂອງບໍລິສັດ ຫ້າງຮ້ານຕົວແທນຈຳໜ່າຍອຸປະກອນໄອທີ ມີຄວາມຕ້ອງການຍື່ນຊອງປະມູນຕ້ອງປະກອບດັ່ງນີ້.**

1. **ຊອງເອກະສານປະກອບມີ:**
   - ໃບທະບຽນວິສາຫະກິດ, ໃບຢັ້ງຢືນການເສຍອາກອນ 03 ປີຍ້ອນຫຼັງ 2017, 2018, 2019 ໃບຢັ້ງຢືນເປັນຕົວແທນຈຳໜ່າຍອຸປະກອນໄອທີ ຫຼື ມີໃບຢັ້ງຢືນເຄື່ອງໄອທີລະບຸບໍ່ຜະລິດ ຫຼື ມີເອກະສານທີ່ກ່ຽວຂ້ອງ, ລະບຸໄລຍະເວລາໃນການຮັບປະກັນ, ຜົນງານຜ່ານມາທີ່ເຄີຍສະໜອງອຸປະກອນໄອທີດັ່ງກ່າວໃຫ້ພາກສ່ວນອື່ນ, ມີປະສົບການຜົນງານ 03 ປີ ຂຶ້ນໄປ ແລະ ມີວິຊາການບໍລິການຫຼັງການຂາຍ.
   - ໜັງສືຄ້ຳປະກັນການປະມູນ 2% ແລະ ຕ້ອງມີອາຍຸຮອດວັນທີ 05/06/2020, ພາຍຫລັງປະກາດຜົນ ທຄຕລ ຈະສົ່ງເອກະສານຄືນ.
2. **ຊອງໃບສະເໜີລາຄາ** (ຕ້ອງເປັນສະກຸນເງິນກີບລວມອາກອນມູນຄ່າເພີ່ມ 10%).
   - ໃບສະເໜີລາຄາໃຫ້ລະບຸລາຄາຫົວໜ່ວຍແຕ່ລະລາຍການ ແລະ ລວມມູນຄ່າທັງໝົດໃຫ້ຄົບຖ້ວນ.

**II. ເງື່ອນໄຂຂອງສັນຍາລະຫວ່າງ ທຄຕລ ແລະ ຜູ້ທີ່ຊະນະການປະມູນ, ການຊຳລະແບ່ງຈ່າຍເປັນ 02 ງວດ ລຸ່ມນີ້:**

**II. ເງື່ອນໄຂຂອງສັນຍາລະຫວ່າງ ທຄຕລ ແລະ ຜູ້ທີ່ຊະນະການປະມູນ, ການຊໍາລະແບ່ງຈ່າຍເປັນ 02 ງວດ ລຸ່ມນີ້:**

ງວດທີ 1: ຊໍາລະ 90% ຂອງມູນຄ່າ ພາຍຫລັງໄດ້ຮັບເຄື່ອງ ແລະ ຕິດຕັ້ງເຄື່ອງສໍາເລັດ.

ງວດທີ 2: ຊໍາລະ 10% ຂອງມູນຄ່າທັງໝົດພາຍຫຼັງຄົບກໍານົດຄໍ້າປະກັນສິນຄ້າຕະຫຼອດອາຍຸຂອງສັນຍາ ຫຼື ສະມາດປະກອບໜັງສືຄໍ້າປະກັນຈາກທະນາຄານ ຫຼື ສະຖາບັນການເງິນໃຫ້ ທຄຕລ ຈົນກວ່າຈະໝົດໄລຍະເວລາຄໍ້າປະກັນ.

❖ **<u>ໝາຍເຫດ:</u>**

1. ຍື່ນເອກະສານສະເໜີລາຄາ ພ້ອມທັງເອກະສານດ້ານເຕັກນິກຂອງບໍລິສັດ ແລະ ຫຼັກຖານອື່ນໆ ມາຍັງພະແນກຫ້ອງການບໍລິຫານ-ການເງິນ ທຄຕລ ສໍານັກງານໃຫຍ່ ທີ່ປ່ອງບໍລິການຂາເຂົ້າ-ຂາອອກ ຊັ້ນ 4 ອາຄານ C. ໃນວັນທີ 20/05/2020 ແລະ ຈະປິດການຮັບຊອງເວລາ 09:00 ໂມງ ຂອງວັນດຽວກັນ.
2. ຖ້າຜູ້ຊະນະການປະມູນປະຕິເສດການເຊັນສັນຍາ ຫຼື ບໍ່ຍື່ນເງິນຄໍ້າປະກັນການປະຕິບັດສັນຍາຕາມກໍານົດ, ຜູ້ຊະນະການປະມູນຕ້ອງໄດ້ຈ່າຍຄ່າເສຍຫາຍໃຫ້ແກ່ ທຄຕລ (ເຈົ້າຂອງໂຄງການ) ໃນມູນຄ່າທີ່ໄດ້ຄໍ້າປະກັນການປະມູນ.

ດັ່ງນັ້ນ, ຈຶ່ງອອກແຈ້ງເຊີນມາຍັງທ່ານທີ່ມີຄວາມສົນໃຈເຂົ້າຮ່ວມຍື່ນຊອງປະມູນໃນຄັ້ງນີ້.

**ຜູ້ອໍານວຍການທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ**

ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC

ສຸພັກ ຖິ່ນໄຊພອນ

- **ເບີໂທຜູ້ປະສານງານ**

ນາງ ຈັນມາລີ ພິມວົງສາ 02055888876

ນາງ ເພັດສົມພອນ ຍອຍບົວກ່ອງ 02056800008

ດ້ານໜ້າ


ກະລຸນາຮັບບັດຄິວ
Please press the queue card
299 8
298 17
297 14
296 10
295 17
294 8
ຮັບບັດຄິວ / Queue Reciept
ສະແກນບາໂຄ້ດ / Qr Code Scan
ຮັບຟອມອອນໄລ
Accept online form


ດ້າຂ້າງ